**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ...76.../ສພຂ.ຊຍ
ໄຊຍະບູລີ, ວັນທີ...31...ທັນວາ 2021

# ມະຕິ
## ກອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ
## ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສານປະຊາຊົນແຂວງ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ວ່າດ້ວຍກອງປະຊຸມປະຈຳປີ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານ ຂອງສານປະຊາຊົນແຂວງ ສະບັບເລກທີ 309/ສປຊ.ຊຍ, ລົງວັນທີ 9 ທັນວາ 2021 ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງເລິກເຊິ່ງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການວຽກງານຈຸດສຸມປີ 2022 ຂອງສານປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງໄຊຍະບູລີ ຊຸດທີ II, ວັນທີ 29-31 ທັນວາ 2021.

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງສານປະຊາຊົນແຂວງ**

ກອງປະຊຸມສະແດງຄວາມຊົມເຊີຍ ຕໍ່ສານປະຊາຊົນແຂວງ ທີ່ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ, ຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານທິດສະດີ ແລະ ວິຊາສະເພາະໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານ ປັບປຸງແບບແຜນວິທີເຮັດວຽກ, ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ເຮັດໃຫ້ການເຄື່ອນໄຫວວຽກງານມີຜົນສຳເລັດຫຼາຍດ້ານ ເປັນຕົ້ນໄດ້ເອົາໃຈໃສ່ຕັດສິນ ແລະ ພິພາກສາຄະດີດ້ວຍຄວາມຮັບຜິດຊອບສູງ. ເຊິ່ງສະແດງອອກ ໃນ 01 ປີ ຜ່ານມາ ຢູ່ສານປະຊາຊົນແຂວງ ແລະ ສານປະຊາຊົນເຂດ ມີຄະດີຄ້າງມາທັງໝົດ 48 ເລື່ອງ, ໃນນີ້ຂັ້ນອຸທອນ 06 ເລື່ອງ, ເຂົ້າໃໝ່ 556 ເລື່ອງ, ໃນນີ້ຂັ້ນອຸທອນ 07 ເລື່ອງ, ລວມຄະດີທັງໝົດ 604 ເລື່ອງ, (ຂັ້ນອຸທອນ 13 ເລື່ອງ) ແກ້ໄຂແລ້ວ 559 ເລື່ອງ, (ຂັ້ນອຸທອນ 10 ເລື່ອງ) ເທົ່າກັບ 92,54%, ຄະດີຄ້າງມາພວມສືບຕໍ່ 45 ເລື່ອງ (ຂັ້ນອຸທອນ 03 ເລື່ອງ) ເທົ່າກັບ 7,45 %, ໃນຄະດີທີ່ແກ້ໄຂໄປແລ້ວນັ້ນ ຄູ່ຄວາມມີການຈອງຂໍອຸທອນ 10 ເລື່ອງ, ເທົ່າກັບ 1,78 %.

ຄຽງຄູ່ກັບດ້ານດີ, ຜົນງານທີ່ຍາດມາໄດ້ ກອງປະຊຸມເຫັນວ່າ ສານປະຊາຊົນແຂວງ ຍັງມີບາງວຽກງານ

ຈະຕ້ອງໄດ້ສືບຕໍ່ແກ້ໄຂ ດັ່ງນີ້:

1) ເອົາໃຈໃສ່ ແລະ ຖືສຳຄັນວຽກງານການເມືອງ-ແນວຄິດ ເພື່ອປັບປຸງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ນ້ຳໃຈຮັບໃຊ້ປະຊາຊົນ ຂອງຜູ້ພິພາກສາ, ພະນັກງານຂອງສານປະຊາຊົນໃຫ້ມີຄວາມຊື່ສັດບໍລິສຸດ, ມີຄວາມໂປ່ງໃສ ແລະ ຍຸຕິທຳ ພ້ອມທັງປະຕິບັດກົດໝາຍຢ່າງເຂັ້ມງວດ;
2) ຕິດຕາມກວດກາ, ປະເມີນ ແລະ ຄັດເລືອກຜູ້ພິພາກສາດີ-ເກັ່ງ ຕາມມາດຖານ ແລະ ເງື່ອນທີ່ກຳນົດໄວ້ ເພື່ອຊອກໃຫ້ເຫັນດ້ານຕັ້ງໜ້າທີ່ຈະຕ້ອງໄດ້ຍ້ອງຍໍ ແລະ ຊອກໃຫ້ເຫັນດ້ານຄົງຄ້າງທີ່ຈະຕ້ອງໄດ້ປັບປຸງ ແລະ ພັດທະນາໃຫ້ ດີ-ເກັ່ງ ໃນຕໍ່ໜ້າ;
3) ເພີ່ມທະວີກົນໄກການປະສານສົມທົບ ສານປະຊາຊົນແຂວງ, ສານປະຊາຊົນເຂດ ແລະ ພາກສ່ວນກ່ຽວຂ້ອງ ໃນການແກ້ໄຂຄະດີທີ່ມີຄວາມຫຍຸ້ງຍາກສັບສົນ;
4) ຍົກສູງປະສິດທິພາບໃນການດຳເນີນຄະດີຢູ່ສານ ເຮັດໃຫ້ການພິຈາລະນາ ແລະ ຕັດສິນຄະດີຂອງສານມີຄຸນນະພາບ ແລະ ປະສິດທິພາບສູງຂຶ້ນເທື່ອລະກ້າວ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີຮັບເອົາບັນດາເນື້ອໃນທີ່ກຳນົດໄວ້ໃນຄາດໝາຍສູ້ຊົນ ແລະ ທິດທາງແຜນການຈຸດສຸມປະຈຳປີ 2022 ທີ່ໄດ້ກຳນົດ 04 ຄາດໝາຍ, 08 ວຽກງານຈຸດສຸມ ແລະ 04 ມາດຕະການຈັດຕັ້ງປະຕິບັດ ຂອງສານປະຊາຊົນແຂວງ ແຕ່ກອງປະຊຸມສະເໜີໃຫ້ ສານປະຊາຊົນແຂວງເອົາໃຈໃສ່ ດັ່ງນີ້:

1) ຍົກສູງຄຸນພາບຂອງການດຳເນີນຄະດີຢູ່ສານຂັ້ນຕົ້ນ ໃຫ້ບັນລຸ 85% ຂຶ້ນໄປ ຂອງຄະດີທັງໝົດທີ່ເຂົ້າມາສານ, ອັດຕາການຂໍອຸທອນ ບໍ່ໃຫ້ເກີນ 15% ແລະ ອັດຕາການຂໍລົບລ້າງໃຫ້ໜ້ອຍລົງ ຂອງຄະດີທີ່ເຂົ້າມາສານ ໂດຍທຽບໃສ່ປີຜ່ານມາ;
2) ເອົາໃຈໃສ່ປັບປຸງ ແລະ ຍົກສູງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ-ຈັນຍາທຳ, ຄວາມຮູ້, ຄວາມສາມາດ, ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ ຂອງຜູ້ພິພາກສາ;
3) ການຕີລາຄາ, ປະເມີນຜົນຜູ້ພິພາກສາ ດີ-ເກັ່ງ ໃຫ້ໄດ້ 25% ຂຶ້ນໄປ ຂອງຜູ້ພິພາກສາທັງໝົດ;
4) ເພີ່ມທະວີການປະສານສົມທົບ ກັບ ຂະແໜງການທີ່ກ່ຽວຂ້ອງ ໃນການດຳເນີນຄະດີໃຫ້ມີຄວາມຄ່ອງຕົວ ແລະ ກົມກຽວເພື່ອຮັບປະກັນໃຫ້ດຳເນີນຄະດີມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ;
5) ສືບຕໍ່ຮ່ວມມືກັບສາກົນຕາມແນວທາງການຕ່າງປະເທດຂອງພັກເຮົາ ແລະ ສະເໜີນຳຂັ້ນເທິງສາຍຕັ້ງເພື່ອຂໍແຮກສ່ຽວ ກັບ ສານແຂວງໃດໜຶ່ງ ຂອງ ສສ ຫວຽດນາມ.

**ມາດຕາ 3 ຮັບຮອງເອົາບັນດາມາດຕະການຈັດຕັ້ງປະຕິບັດ ຂອງສານປະຊາຊົນແຂວງ**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ 04 ມາດຕະການຈັດຕັ້ງປະຕິບັດ ທີ່ສານປະຊາຊົນແຂວງ ໄດ້ກຳນົດໄວ້ໃນບົດລາຍງານ ແຕ່ກອງປະຊຸມສະເໜີບາງມາດຕະການ ເພີ່ມຕື່ມ ດັ່ງນີ້:

1) ເອົາໃຈໃສ່ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020 ວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີຕາມຂະບວນຍຸຕິທຳ;
2) ຕ້ອງເພີ່ມທະວີບົດບາດການນຳພາ-ຊີ້ນຳ ຂອງຄະນະພັກ, ຄະນະນຳໃຫ້ເລິກເຊິ່ງກວ່າເກົ່າ, ສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ບັນດາຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຈັນຍາບັນ-ຈັນຍາທຳ, ມີນ້ຳໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ, ເຄົາລົບລະບຽບວິໄນຂອງການຈັດຕັ້ງ, ມີສະຕິເຄົາລົບປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ;
3) ເອົາໃຈໃສ່ປັບປຸງກົນໄກແບບແຜນວິທີເຮັດວຽກ ກໍຄືການດຳເນີນຄະດີໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຮັບປະກັນໃຫ້ມີຄວາມຍຸຕິທຳໃນສັງຄົມ;
4) ບຳລຸງສ້າງຜູ້ພິພາກສາ, ພະນັກງານຂອງສານໃນທົ່ວແຂວງ ໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຈັນຍາບັນ-ຈັນຍາທຳ ໜັກແໜ້ນ ໄປຄຽງຄູ່ກັບຄວາມຮູ້, ຄວາມສາມາດທາງດ້ານ

ວິຊາສະເພາະດ້ານກົດໝາຍ, ພາສາຕ່າງປະເທດ ກໍຄືວິທີການດຳເນີນຄະດີຂອງສານ;

5) ສືບຕໍ່ເອົາໃຈໃສ່ຂອດປະສານສົມທົບ, ປຶກສາຫາລື ແລະ ຂໍທິດຊີ້ນຳຈາກຄະນະພັກ, ອຳນາດການປົກຄອງທ້ອງຖິ່ນ, ສະພາປະຊາຊົນແຂວງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1) ມອບໃຫ້ ສານປະຊາຊົນແຂວງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

2) ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳອົງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;

3) ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ຕິດຕາມກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນີລັນ ຄຳພັນເພັງ